# ລົດຜ່ອນຄວາມຢ້ານກົວດ້ວຍຄວາມເປັນຈິງ

## ຂໍ້ມູນກ່ຽວກັບພລັບບຣິກ ຊາຣຈ໌ (Public Charge)

**ປັບປຸງໃນເດືອນກຸມພາ 2020**

**ຮູ້ຄວາມເປັນຈິງ. ທ່ານມີສິດທິ.** ມາດຕະຖານລັດຖະບານກາງອັນໃໝ່ທີ່ຊັບຊ້ອນສຳລັບການຕັດສິນໃນເວລາຄົນອົບພະຍົບອາດຈະກາຍເປັນພລັບບຣິກ ຊາຣຈ໌ (ບຸກຄົນທີ່ຕ້ອງຂໍຄວາມຊ່ວຍເຫຼືອທາງການເງິນຈາກລັດຖະບານ), ມາດຕະຖານດັ່ງກ່າວສາມາດເຮັດໃຫ້ບຸກຄົນຈຳນວນຫລວງຫລາຍຜູ້ທີ່**ຈະບໍ່**ຖືກກະທົບໂດຍກົດລະບຽບຍົກເລີກການສະໝັກຈາກຜົນປະໂຫຍດຕ່າງໆ.

**ເນື້ອໃນໃນເອກະສານສະບັບນີ້ບໍ່ແມ່ນຄຳແນະນຳທາງກົດໝາຍ.** ແຕ່ລະສະພາບຂອງການອົບພະຍົບເຂົ້າເມືອງແມ່ນມີລັກສະນະຈຳເພາະ. ຖ້າທ່ານມີຄຳຖາມກ່ຽວກັບທ່ານ ຫລື ສະຖານະຂອງສະມາຊິກຄອບຄົວຂອງທ່ານ ແລະ/ຫຼື ການໃຊ້ຜົນປະໂຫຍດ, ຊັບພະຍາກອນແມ່ນມີພ້ອມໃຫ້ໃນການສະໜອງການຊ່ວຍເຫຼືອທີ່ບໍ່ເສຍຄ່າ ແລະ ເປັນຄວາມລັບ.

### ກົດລະບຽບວ່າດ້ວຍພລັບບຣິກ ຊາຣຈ໌ສະບັບໃໝ່ບໍ່ກະທົບຄົນອົບພະຍົບສ່ວນໃຫຍ່.

ຄົນຂໍລີ້ໄພ, ຜູ້ໄດ້ຮັບອະນຸຍາດການລີ້ໄພທາງການເມືອງ, ຜູ້ລອດຊີວິດຈາກການຄ້າມະນຸດ, ຄວາມຮຸນແຮງໃນຄອບຄົວ ແລະການກະທຳຜິດທີ່ຮ້າຍແຮງອື່ນໆ ແລະ ຄົນອົບພະຍົບ "ທາງດ້ານມະນຸດສະທຳ" ຈະບໍ່ໄດ້ຮັບຜົນກະທົບ. ພົນລະເມືອງທີ່ໄດ້ອະນຸຍາດຢູ່ຖາວອນຕາມກົດໝາຍ (ຫລື ຜູ້ຖື "ບັດຂຽວ green cards" ຈະບໍ່ໄດ້ຮັບຜົນກະທົບເວັ້ນແຕ່ວ່າ ພວກເຂົາອອກຈາກ ສະຫະລັດເປັນເວລາ 180 ວັນ ແລະຕ້ອງການເຂົ້າມາຄືນໃໝ່. ຜົນປະໂຫຍດທີ່ໄດ້ຮັບເມື່ອຜູ້ຄົນນອນຢູ່ໃນໜຶ່ງຂອງສະຖານະເຫລົ່ານັ້ນຈະບໍ່ຖືກນັບ.

### ໂປຣແກຣມສາທາລະນະຫລາຍໆໂປຣແກຣມບໍ່ຖືກພິຈາລະນາໃນການທົດສອບ ພລັບບຣິກ ຊາຣຈ໌ (public charge)ຂອງລັດຖະບານກາງ.

ໂປຼແກຣມອາຫານຊ່ວຍຊີວິດ ແລະໂພຊະນາການ ເຊັ່ນວ່າ: WIC, CHIP, ອາຫານທ່ຽງໃນໂຮງຮຽນ, ທະນາຄານອາຫານ, ທີ່ຫລົບໄພ, ການຊ່ວຍເຫຼືອດູແລເດັກນ້ອຍ, ການດູແລສຸຂະພາບທີ່ສະໜອງທຶນໂດຍທ້ອງຖິ່ນແລະລັດ, ແລະໂປຣແກຣມອື່ນໆອີກຫລາຍທີ່ບໍ່ໄດ້ລວມເຂົ້າໃນການທົດສອບ ພລັບບຣິກ ຊາຣຈ໌ຂອງລັດຖະບານກາງ.

### ການໃຊ້ ໂປຼແກຣມສາທາລະນະບໍເຮັດໃຫ້ ບຸກຄົນໜຶ່ງກາຍເປັນ ພລັບບຣິກ ຊາຣຈ໌ ໂດຍອັດຕະໂນມັດ.

ເຈົ້າໜ້າທີ່ກວດກາຄົນເຂົ້າເມືອງຕ້ອງເບິ່ງທີ່ **ສະພາບການທັງໝົດ** ໃນການຕັດສິນບໍ່ວ່າບຸກຄົນອາດຈະກາຍເປັນ ພລັບບຣິກ ຊາຣຈ໌ໃນອະນາຄົດຫລືບໍ່ກໍຕາມ. ນີ້ລວມທັງອາຍຸ, ສຸຂະພາບ, ລາຍຮັບ, ຊັບສິນ, ຊັບພະຍາກອນ, ການສຶກສາ/ທັກສະຂອງທ່ານ, ຄອບຄົວທີ່ບຸກຄົນນັ້ນຕ້ອງຊ່ວຍເຫຼືອ ແລະ ຄອບຄົວຜູ້ທີ່ຈະຊ່ວຍເຫຼືອບຸກຄົນນັ້ນ. ປັດໄຈທາງບວກເຊັ່ນວ່າ ການມີວຽກເຮັດງານທຳ ຫລື ປະກັນສຸຂະພາບ, ສາມາດນຳມາພິຈາລະນາກັບປັດໄຈທາງລົບໄດ້, ເຊັ່ນວ່າ ການໄດ້ໃຊ້ຜົນປະໂຫຍດໜຶ່ງໆແລ້ວ ຫລື ການມີບັນຫາທາງສຸຂະພາບ. ແຕ່ລະບຸກຄົນຈະມີໂອກາດໃນການສະແດງວ່າເປັນຫຍັງພວກເຂົາບໍ່ອາດຈະເພິ່ງພາອາໄສ ຜົນປະໂຫຍດໜຶ່ງໆໃນອະນາຄົດ.

**ຜົນປະໂຫຍດທີ່ໄດ້ໃຊ້ໂດຍສະມາຊິກຄອບຄົວຈະບໍ່ຖືກນັບເຂົ້າໃນການເຮັດການຕັດສິນ ພລັບບຣິກ ຊາຣຈ໌ ໃນສະຫະລັດ.**

ສະມາຊິກຄອບຄົວທີ່ເປັນສັນຊາດອາເມລິກາສາມາດໃຊ້ໂປຣແກຣມໂພຊະນາການ, ອາຫານ ຫລື ທີ່ພັກອາໄສໂດຍບໍ່ຕ້ອງຢ້ານກົວ. ລວມເຖິງຊື່ຂອງພໍ່ແມ່ໃນ ໃບຂໍສະໝັກຂອງລູກໆຂອງພວກເຂົາບໍ່ໝາຍຄວາມວ່າ ພວກເຂົາໄດ້ສະໝັກຂໍ ຜົນປະໂຫຍດຕ່າງໆໃຫ້ພວກເຂົາເອງ.

**ມີກົດໝາຍໃນການປົກປ້ອງຂໍ້ມູນກ່ຽວກັບການສະໝັກຂໍຜົນປະໂຫຍດສາທາລະນະ ແລະ ຜູ້ຮັບຜົນປະໂຫຍດ.**

ໂດຍທົ່ວໄປກົດໝາຍປະຈຳລັດ ແລະລັດຖະບານກາງປົກປ້ອງ ຄວາມເປັນສ່ວນຕົວຂໍ້ມູນຂອງທ່ານເມື່ອຂໍສະໝັກ ຫລື ຮັບປະກັນໄພທາງການດູແລສຸຂະພາບ, ໂພຊະນາການ, ການຊ່ວຍເຫຼືອທາງເສດຖະກິດ ຫລື ຜົນປະໂຫຍດສາທາລະນະອື່ນ.

# ການຊ່ວຍເຫຼືອທີ່ບໍ່ເສັຍຄ່າແລະເປັນຄວາມລັບ

**ການຊ່ວຍເຫຼືອແມ່ນມີໃຫ້ທ່ານ!** ຖ້າທ່ານມີຄຳຖາມສະເພາະ ຫລື ຂໍ້ກັງວົນກ່ຽວກັບຜົນກະທົບໃນການໃຊ້ ຜົນປະໂຫຍດສາທາລະນະບົນສະຖານະຄົນອົບພະຍົບຂອງທ່ານ, ໃຫ້ພົວພັນ ທະນາຍຄວາມດ້ານການອົບພະຍົບເຂົ້າເມືອງ.

ຕິດຕໍ່ຫາໜຶ່ງໃນອົງກອນຕໍ່ໄປນີ້ເພື່ອຂໍຄວາມຊ່ວຍເຫຼືອ:

- ສາຍດ່ວນ CLEAR: 1-888-201-1014
- Northwest Immigrant Rights Project (NWIRP):
    - NWIRP Seattle Office: 206-587-4009
    - NWIRP Yakima Valley (Granger) Office: 509-854-2100
    - NWIRP Wenatchee Office: 509-570-0054

ມີຊັບພະຍາກອນພ້ອມໃຫ້ທ່ານຜ່ານ ອົງການຈັດຕັ້ງທີ່ລະບຸໃນເວັບໄຊທ໌ຂອງລັດຖະບານ:
https://www.governor.wa.gov/issues/issues/safe-communities/immigration-and-refugee-resources

washington healthplanfinder
click. compare. covered.